**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 27 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16/11/21

**ມະຕິ**

**ກອງປະຊຸມສະພາແຫ່ງຊາດ**

**ວ່າດ້ວຍ ການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງ ອົງການໄອຍະການປະຊາຊົນສູງສຸດ**

- ອີງຕາມ ລັດຖະທຳມະນູນ ສະບັບປີ 2015, ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2020, ມາດຕາ 59 ຂໍ້ 03;
- ອີງຕາມ ບົດລາຍງານ ຂອງ ອົງການໄອຍະການປະຊາຊົນສູງສຸດ ສະບັບເລກທີ 024/ອອປສ ລົງວັນທີ 02 ພະຈິກ 2021.

ຜ່ານການພິຈາລະນາຢ່າງເລິກເຊິ່ງ ຂອງ ບັນດາສະມາຊິກສະພາແຫ່ງຊາດ ຕໍ່ ບົດລາຍງານ ຂອງອົງການໄອຍະການປະຊາຊົນສູງສຸດ ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສະພາແຫ່ງຊາດ ຊຸດທີ IX, ວັນທີ 08 ພະຈິກ 2021.

**ກອງປະຊຸມ ຕົກລົງ**

ມາດຕາ 1 **ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 9 ເດືອນ ປະຈຳປີ 2021 ແລະ ວຽກງານ 03 ເດືອນທ້າຍປີ 2021 ຂອງ ອົງການໄອຍະການປະຊາຊົນສູງສຸດ**

ກອງປະຊຸມ ສະແດງຄວາມຊົມເຊີຍ ອົງການໄອຍະການປະຊາຊົນສູງສຸດ ທີ່ໄດ້ເອົາໃຈໃສ່ ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ລັດຖະທຳມະນູນ ແລະ ກົດໝາຍ, ໃນທ່າມກາງສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຜົນກະທົບຢ່າງຮ້າຍແຮງຈາກການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ແຕ່ດ້ວຍຄວາມຮັບຜິດຊອບການເມືອງສູງ ຂອງ ອົງການໄອຍະການປະຊາຊົນສູງສຸດ ໃນ 9 ເດືອນຜ່ານມາ ສາມາດຈັດຕັ້ງປະຕິບັດແຜນວຽກ ປະຈຳປີ 2021 ສຳເລັດຫຼາຍດ້ານເປັນຕົ້ນ: ໄດ້ສຳເລັດການແຕ່ງຕັ້ງຄະນະກຳມະການໄອຍະການປະຊາຊົນສູງສຸດ, ບຳລຸງສ້າງພະນັກງານທາງດ້ານທິດສະດີ, ວິຊາສະເພາະ, ຈັນຍາບັນ-ຈັນຍາທຳ, ຍູ້ແຮງຂະບວນການວຽກດີຄົນເດັ່ນ ຕາມຄຳຂວັນ 3 ມີ 4 ຮັບປະກັນ, ການຕິດຕາມກວດກາ ການປະຕິບັດກົດໝາຍຂອງ ອົງການສືບສວນ-ສອບສວນ ໃນການດຳເນີນ